ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********************

<u>ກະຊວງແຮງງານ ແລະ ສະຫວັດດີການສັງຄົມ</u> ເລກທີ 043 /ຮສສ

ນະຄອນຫລວງວຽງຈັນ, ວັນທີ 12.01.2010

# ຂໍ້ຕົກລົງ
# ວ່າດ້ວຍການສ້າງຕັ້ງ
# ແລະ ຄຸ້ມຄອງ ວິສາຫະກິດບໍລິການຈັດຫາງານ

- ອີງຕາມກົດໝາຍ ວ່າດ້ວຍແຮງງານ ແຫ່ງ ສປປ ລາວ ສະບັບເລກທີ 06/ສພຊ, ລົງວັນທີ 27 ທັນວາ 2006.
- ອີງຕາມ ກົດໝາຍ ວ່າດ້ວຍ ວິສາຫະກິດ ແຫ່ງ ສປປ ລາວ ສະບັບເລກທີ 55/ສພຊ, ລົງວັນທີ 9 ພະຈິກ 2005.
- ອີງຕາມດຳລັດຂອງ ນາຍົກລັດຖະມົນຕີ ສະບັບເລກທີ 68/ນຍ, ລົງວັນທີ 28 / 5 / 2002 ວ່າດ້ວຍການຈັດສົ່ງຜູ້ ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 138/ນຍ, ລົງວັນທີ 04/ 5/ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ລັດຖະມົນຕີ ວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຂໍ້ຕົກລົງ :**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງ ສະບັບນີ້ ເພື່ອ ກຳນົດຫລັກການ, ລະບຽບການ, ມາດຕະການ ການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງກ່ຽວກັບ ວິສາຫະກິດບໍລິການຈັດຫາງານ ແນໃສ່ໃຫ້ຜູ້ອອກແຮງງານລາວມີວຽກເຮັດ, ມີລາຍໄດ້ ແລະ ຫລຸດຜ່ອນຄວາມທຸກຍາກ.

**ມາດຕາ 2. ການອະທິບາຍຄຳສັບ**

1. ວິສາຫະກິດບໍລິການຈັດຫາງານ ໝາຍເຖິງ ຫົວໜ່ວຍບໍລິການຈັດຫາງານທີ່ບຸກຄົນ ຫລື ນິຕິບຸກຄົນ ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດບໍລິການຈັດຫາງານຖືກຕ້ອງ ຕາມລະບຽບກົດໝາຍ ຈາກອົງການລັດທີ່ຄຸ້ມຄອງການຈັດຫາງານ.
2. **ຕະຫລາດແຮງງານ** ໝາຍເຖິງ ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມຕ້ອງການນຳໃຊ້ແຮງງານ.
3. **ຄວາມຕ້ອງການແຮງງານ** ໝາຍເຖິງຂໍ້ມູນທີ່ຈະບັນຈຸເຂົ້າເຮັດວຽກຕາມຕຳແໜ່ງງານ ທີ່

ກຳນົດ ເງື່ອນໄຂການເຮັດວຽກ, ເງິນເດືອນ ຫລືຄ່າແຮງງານ, ຜົນປະໂຫຍດ ແລະ ນະໂຍບາຍອື່ນໆ.

4. **ການສະໜອງແຮງງານ** ໝາຍເຖິງຈຳນວນຜູ້ອອກແຮງງານທີ່ພ້ອມຈະເຮັດວຽກ ຫລື ເຂົ້າສູ່ຕະຫລາດແຮງງານ ຕາມບັນຊີ ຫລື ຂໍ້ມູນທີ່ໄດ້ຂຶ້ນທະບຽນ ແລະ ຈັດແຍກຕາມ ປະເພດ ຜູ້ມີສີມື ແລະ ຜູ້ບໍ່ມີສີມື ເພື່ອສະໜອງແຮງງານເຂົ້າເຮັດວຽກຕາມຕຳແໜ່ງງານ ທີ່ເໝາະສົມ.
5. **ຂັ້ນຕອນການຈັດຫາງານ** ໝາຍເຖິງ ການຮັບສະໝັກງານ, ການປະກອບເອກະສານ, ແຈ້ງລາຍຊື່, ຝຶກອົບຮົມ, ການສົ່ງເຂົ້າເຮັດວຽກ, ການຕິດຕາມຄຸ້ມຄອງ ແລະ ສິ່ງກັບເວລາສິ້ນສຸດສັນຍານຳໃຊ້ແຮງງານ.
6. **ອົງການລັດຄຸ້ມຄອງການຈັດຫາງານ** ໝາຍເຖິງ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ມາດຕາ 3. ນະໂຍບາຍ ແລະ ຜົນປະໂຫຍດ**

ລັດຊຸກຍູ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ພາຍໃນ ຫລື ຕ່າງປະເທດທີ່ຮ່ວມທຶນກັບຄົນລາວ ໃນການ ສ້າງຕັ້ງວິສາຫະກິດບໍລິການຈັດຫາງານ ຫລື ເຂົ້າຮ່ວມການດຳເນີນທຸລະກິດໃນ ການບໍລິການ ຈັດຫາງານ ຕາມຫລັກການ, ລະບຽບການ, ມາດຕະການ, ລວມທັງການສະໜອງຂໍ້ມູນຂ່າວສານ, ເພື່ອອຳນວຍ ຄວາມສະດວກອື່ນໆໃຫ້ແກ່ວິສາຫະກິດການບໍລິການຈັດຫາງານ ສາມາດປະກອບສ່ວນເຂົ້າໃນການສ້າງເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 4. ຫລັກການບໍລິການຈັດຫາງານໃຫ້ພົນລະເມືອງລາວ**

ຫລັກການບໍລິການຈັດຫາງານໃຫ້ພົນລະເມືອງລາວ ມີດັ່ງນີ້ :

- ຮັບປະກັນຜົນປະໂຫຍດຂອງລັດ, ຜູ້ອອກແຮງງານ, ຜູ້ໃຊ້ແຮງງານ ແລະ ຜູ້ເຮັດວຽກບໍລິການຈັດຫາງານ;
- ການຈັດຫາງານຕ້ອງມີຂໍ້ມູນ ຄວາມຕ້ອງການ ແລະ ການສະໜອງ ສົມຄູ່ກັນ ເພື່ອດຸ່ນດ່ຽງລະຫວ່າງການສະໜອງ ແລະ ຄວາມຕ້ອງການແຮງງານໃນແຕ່ລະຂົງເຂດ ບໍ່ໃຫ້ມີການຂາດແຄນແຮງງານ ແລະ ບໍ່ໃຫ້ເກີດການຫວ່າງງານ;
- ການຈັດຫາງານຕ້ອງໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ມີຄວາມປອດໄພ ເພື່ອບໍ່ໃຫ້ມີການຕົວະຍົວະ, ຫລອກລວງ ຫລື ເຂົ້າໃນເຄືອຄ່າຍການຄ້າມະນຸດ;
- ບໍ່ມີການຈຳແນກ ຜົວພັນ, ຊົນເຜົ່າ, ເຊື້ອຊາດ ແລະ ສາສະໜາ;
- ເພດຍິງ ແລະ ເພດຊາຍຕ້ອງມີໂອກາດເທົ່າທຽມກັນ,ໃນກໍລະນີເຮັດວຽກຕຳແໜ່ງງານດຽວກັນຕ້ອງໄດ້ຮັບຄ່າແຮງງານ ຫລື ເງິນເດືອນເທົ່າກັນ;
- ການບໍລິການຈັດຫາງານທັງພາຍໃນ ແລະ ຕ່າງປະເທດ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍໃນການດຳເນີນທຸລະກິດບໍລິການຈັດຫາງານ, ທັງແຂ່ງຂັນ, ຮ່ວມມືກັນເພື່ອສະໜອງ ກຳລັງແຮງງານໃຫ້ແກ່ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ;

- ແຮງງານທຸກຄົນທີ່ໄດ້ຖືກສົ່ງເຂົ້າເຮັດວຽກຢູ່ໃນຫົວໜ່ວຍແຮງງານພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ຮັບການຄຸ້ມຄອງ ດູແລດ້ານສິດທິ ແລະ ຜົນປະໂຫຍດຕາມສັນຍາໂດຍສອດຄ່ອງ ຕາມລະບຽບກົດໝາຍ;
- ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານລ້ວນແຕ່ມີສິດ ແລະ ພັນທະໃນການປະຕິບັດສັນຍາທີ່ໄດ້ ລົງລາຍເຊັນເຫັນດີ ເຫັນພ້ອມນຳກັນ;
- ການບໍລິການຈັດຫາງານຕ້ອງມີອົງປະກອບພື້ນຖານຖືກຕ້ອງຕາມມາດຕະຖານ ແລະ ສອດຄ່ອງຕາມລະບຽບກົດໝາຍກ່ຽວກັບແຮງງານ.

**ມາດຕາ 5. ມາດຕະຖານຂອງວິສາຫະກິດບໍລິການຈັດຫາງານ**

ວິສາຫະກິດບໍລິການຈັດຫາງານຕ້ອງມີມາດຕະຖານ ດັ່ງນີ້:

1. ມີສຳນັກງານທີ່ປະກອບດ້ວຍຫ້ອງເຮັດວຽກຄື:
   - ຫ້ອງຮັບຕ້ອນລໍຖ້າສຳພາດ.
   - ຫ້ອງພົວພັນກັບຜູ້ໃຊ້ແຮງງານ.
   - ຫ້ອງສະໜອງຂໍ້ມູນ ແລະ ໃຫ້ຄຳແນະນຳ.
   - ຫ້ອງການບໍລິຫານ, ການເງິນ.
   - ຫ້ອງຄະນະອຳນວຍການ ແລະ ຫ້ອງເຮັດວຽກອື່ນໆ.
   - ຫ້ອງເກັບມ້ຽນເອກະສານ ແລະ ຂໍ້ມູນຢ່າງເປັນລະບົບ.
2. ບຸກຄະລາກອນຕ້ອງມີຄວາມຮູ້ ຄວາມສາມາດໃນການບໍລິຫານວຽກງານ ແລະ ການຈັດຫາງານ. ພ້ອມນີ້ຮູ້ນຳໃຊ້ ຮູບການ, ທາງເລືອກ, ຮູບແບບ ແລະ ຂັ້ນຕອນຂອງການຈັດຫາງານຢ່າງຖືກຕ້ອງ.
3. ມີກົນໄກ ເພື່ອການຈັດຫາງານເປັນຕົ້ນ:
   - ໃບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ;
   - ພາລະບົດບາດການເຄື່ອນໄຫວ, ລະບຽບຂອງວິສາຫະກິດບໍລິການຈັດຫາງານ;
   - ເງິນທຶນໃນການດຳເນີນທຸລະກິດ;
   - ມີຄູ່ມືການຈັດຫາງານ, ແບບຟອມ ແລະ ຮ່າງສັນຍາຕ່າງໆ;
   - ມີຄູ່ມື ເພື່ອເຜີຍແຜ່ ໂຄສະນາການຈັດຫາງານແບບຖືກຕ້ອງ;
   - ພາຫານະ, ເຄື່ອງມື ແລະ ອຸປະກອນການເຮັດວຽກອື່ນໆ.
4. ມີສູນຝຶກສີມືແຮງງານຂັ້ນພື້ນຖານ ເພື່ອສະໜອງຜູ້ອອກແຮງງານທີ່ຈະເຂົ້າສູ່ຕະຫລາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ.
5. ກໍລະນີ ທີ່ມີການນຳເອົາແຮງງານຈາກແຂວງ, ທ້ອງຖິ່ນ ເພື່ອໄປເຮັດວຽກຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງມີສາຂາບໍລິການຈັດຫາງານຢູ່ແຂວງ ຫລື ທ້ອງຖິ່ນນັ້ນຢ່າງຖືກຕ້ອງຕາມລະບຽບການຈັດຫາງານ.

**ມາດຕາ 6. ຂໍ້ມູນການບໍລິການຈັດຫາງານ**

ຂໍ້ມູນການບໍລິການຈັດຫາງານ ມີດັ່ງນີ້:

- ຂໍ້ມູນກ່ຽວກັບນິຕິກຳຕ່າງໆ ຂອງປະເທດຕົນ ແລະ ຂອງປະເທດອື່ນເພື່ອຮັບປະກັນໃຫ້ແກ່ການ ຈັດຫາງານ;
- ທີ່ຕັ້ງຂອງບໍລິສັດ/ວິສາຫະກິດ ແລະ ຂໍ້ມູນອື່ນທີ່ຈຳເປັນໃຫ້ແກ່ການປະສານງານກັບອົງການຄຸ້ມຄອງການຈັດຫາງານ ແລະ ອົງການລັດກ່ຽວຂ້ອງ;
- ຄວາມຕ້ອງການແຮງງານ ຈາກຕະຫລາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ ຊຶ່ງໄດ້ຈາກ ການເກັບກຳ ນຳຜູ້ໃຊ້ແຮງງານ, ບັນດາໂຄງການລົງທຶນ ແລະ ຜູ້ປະກອບການຕ່າງໆ;
- ການສະໜອງແຮງງານເຂົ້າເຮັດວຽກ ຊຶ່ງໄດ້ຈາກການຂຶ້ນທະບຽນແຮງງານ ແລະ ຈັດແຍກຕາມປະເພດແຮງງານທີ່ມີສີມື ແລະ ບໍ່ມີສີມື;
- ຂໍ້ມູນເພື່ອໃຫ້ຄຳແນະນຳ, ຄຳປຶກສາ ແລະ ເຜີຍແຜ່ສະພາບການເຮັດວຽກທີ່ປອດໄພ, ການເຮັດ ວຽກແບບໝັ້ນຄົງໃຫ້ຜູ້ອອກແຮງງານຊາບເປັນຕົ້ນ: ປື້ມຄູ່ມື, ແຜ່ນພັບ, ປິດສະເຕີ, ວາລະສານຄວາມຮູ້ ແລະ ອື່ນໆ;
- ຂໍ້ມູນເພື່ອລາຍງານ ແລະ ການວາງແຜນການໃນການບໍລິການຈັດຫາງານ ແນໃສ່ສ້າງຖານຂໍ້ມູນໃຫ້ສາມາດເຊື່ອມໂຍງກັບຕາໜ່າງການຈັດຫາງານ ແລະ ປະເທດຄູ່ສັນຍາ;

## ມາດຕາ 7. ຮູບການບໍລິການຈັດຫາງານ

ການບໍລິການຈັດຫາງານຢູ່ ສປປ ລາວ ມີ 2 ຮູບການຄື:

1. ຊອກຫາຕຳແໜ່ງງານໃຫ້ຜູ້ຊອກຫາເຮັດວຽກ ໄດ້ເຂົ້າເຮັດວຽກຢູ່ພາຍໃນ ຫລື ໄປເຮັດວຽກຢູ່ຕ່າງປະເທດ ຕາມຄວາມຕ້ອງການ ແລະ ການສະໜອງ;
2. ການສ້າງໂອກາດການມີວຽກເຮັດງານທຳກັບທີ່ ໂດຍການເອົາວຽກມາໃຫ້ເຮັດຢູ່ບ້ານ ຫລື ປະກອບອາຊີບອິດສະລະ.

## ມາດຕາ 8. ທາງເລືອກໃນການບໍລິການຈັດຫາງານ

ທາງເລືອກໃນການບໍລິການຈັດຫາງານມີ 4 ທາງເລືອກ ດັ່ງນີ້ :

- ທາງເລືອກທີ 1: ຊອກຫາຕຳແໜ່ງງານໃຫ້ແຮງງານໄດ້ເຂົ້າເຮັດວຽກຢູ່ພາຍໃນປະເທດ;
- ທາງເລືອກທີ 2: ຊອກຫາຕຳແໜງງານໃຫ້ແຮງງານໄດ້ເຮັດວຽກຢູ່ຕ່າງປະເທດ;
- ທາງເລືອກທີ 3: ຊອກເອົາວຽກມາໃຫ້ປະຊາຊົນ ຫລື ຜູ້ອອກແຮງງານເຮັດຢູ່ບ້ານ;
- ທາງເລືອກທີ 4: ສົ່ງເສີມໃຫ້ຜູ້ອອກແຮງງານປະກອບອາຊີບອິດສະລະ ຫລື ຫັນປ່ຽນອາຊີບລາຍໄດ້ໜ້ອຍໄປສູ່ຜະລິດເປັນສິນຄ້າ.

## ມາດຕາ 9. ຮູບແບບການບໍລິການຈັດຫາງານ

ການບໍລິການຈັດຫາງານປະກອບມີ 5 ຮູບແບບດັ່ງນີ້:

1. ລັດຈັດສົ່ງແຮງງານລາວໄປເຮັດວຽກ ຫລື ໄປຝຶກອົບຮົມຢູ່ຕ່າງປະເທດຕາມສັນຍາໂດຍກົງກັບລັດຖະບານປະເທດຄູ່ສັນຍາ;
2. ວິສາຫະກິດບໍລິການຈັດຫາງານທີ່ໄດ້ຮັບອະນຸຍາດໃຫ້ຈັດຫາງານຢູ່ພາຍໃນປະເທດ ຫລື ຈັດຫາງານທັງຢູ່ພາຍໃນປະເທດ ແລະ ຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ;

3. ບໍລິສັດທີ່ເປັນສາຂາ ຫລື ເປັນສະມາຊິກຕັ້ງຢູ່ ສປປ ລາວໄດ້ຮັບອະນຸຍາດໃຫ້ສົ່ງແຮງງານໄປເຮັດວຽກຢູ່ບໍລິສັດໃຫຍ່ທີ່ຕັ້ງຢູ່ຕ່າງປະເທດ;
4. ບຸກຄົນຕິດຕໍ່ສະໝັກງານດ້ວຍຕົນເອງ ຫລື ພີ່ນ້ອງດຳເນີນທຸລະກິດຢູ່ພາຍໃນ ຫລື ຕ່າງປະເທດຮັບເຂົ້າເຮັດວຽກ ໂດຍໄດ້ຮັບອະນຸຍາດຈາກອົງການລັດທີ່ຄຸ້ມຄອງການຈັດຫາງານ;
5. ລັດສົ່ງເສີມການປະກອບອາຊີບອິດສະລະ ຫລື ຮ່ວມກັບຫົວໜ່ວຍແຮງງານເອົາວຽກມາໃຫ້ປະຊາຊົນເຮັດຢູ່ບ້ານຕາມສັນຍາ.

**ມາດຕາ 10. ການດຸນດ່ຽງການຈັດຫາວຽກເຮັດງານທຳ**

ການດຸນດ່ຽງການຈັດຫາວຽກເຮັດງານທຳໃຫ້ປະຕິບັດ ດັ່ງນີ້ :

- ຫົວໜ່ວຍແຮງງານຕັ້ງຢູ່ເມືອງໃດ ຕ້ອງບຸລິມະສິດໃຫ້ຜູ້ອອກແຮງງານຢູ່ເມືອງນັ້ນເຂົ້າເຮັດວຽກ;
- ກໍລະນີຜູ້ອອກແຮງງານຢູ່ເມືອງນັ້ນບໍ່ພຽງພໍ ໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງລາຍງານໃຫ້ ພະແນກ ຮສສ ແຂວງ ເພື່ອເຄື່ອນຍ້າຍແຮງງານຢູ່ເມືອງອື່ນເຂົ້າມາເຮັດວຽກ ແລະ ພາຍ ຫລັງໝົດສັນຍາແລ້ວໃຫ້ສົ່ງກັບຄືນທ້ອງຖິ່ນເດີມ;
- ກໍລະນີຜູ້ອອກແຮງງານຢູ່ແຂວງທີ່ຫົວໜ່ວຍແຮງງານຕັ້ງຢູ່ບໍ່ພຽງພໍ ກໍ່ສາມາດນຳໃຊ້ວິສາຫະກິດບໍລິການຈັດຫາງານ ເພື່ອເຄື່ອນຍ້າຍຜູ້ອອກແຮງງານຈາກແຂວງອື່ນເຂົ້າມາ ໂດຍມີການປະສານສົມທົບກັບພະແນກ ຮສສ ແຂວງກ່ຽວຂ້ອງ ແລະ ເມື່ອໝົດສັນຍາການຈ້າງງານແລ້ວ ຕ້ອງສົ່ງຜູ້ອອກແຮງງານກັບຄືນພູມລຳເນົາເດີມ.

## ໝວດທີ II
## ການຂໍອະນຸຍາດສ້າງຕັ້ງ ວິສາຫະກິດບໍລິການຈັດຫາງານ

**ມາດຕາ 11. ການສ້າງຕັ້ງວິສາຫະກິດບໍລິການຈັດຫາງານ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ເປັນພົນລະເມືອງລາວ, ລວມທັງຕ່າງປະເທດ ທີ່ຮ່ວມທຶນກັບຄົນລາວ ລ້ວນແຕ່ມີສິດສ້າງຕັ້ງວິສາຫະກິດບໍລິການຈັດຫາງານ ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 12. ການຂໍອະນຸຍາດສ້າງຕັ້ງ**

ການສ້າງຕັ້ງ ວິສາຫະກິດບໍລິການຈັດຫາງານ ຕ້ອງຜ່ານປະຕູດຽວ ໂດຍແມ່ນ ກົມພັດທະນາສີມືແຮງງານ ແລະ ຈັດຫາງານເປັນຜູ້ອະນຸມັດພາຍໃຕ້ການເຫັນດີຂອງລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງ ຂໍອະນຸຍາດສ້າງຕັ້ງ ວິສາຫະກິດບໍລິການຈັດຫາງານ ຕ້ອງຍື່ນຄຳຮ້ອງຕໍ່ອົງການລັດທີ່ຄຸ້ມຄອງການຈັດຫາງານ ໂດຍຜ່ານພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫລື ນະຄອນຫລວງ.

**ມາດຕາ 13. ປະເພດວິສາຫະກິດບໍລິການຈັດຫາງານ**

ປະເພດວິສາຫະກິດບໍລິການຈັດຫາງານມີ ດັ່ງນີ້:

- ວິສາຫະກິດເອກະຊົນ ສາມາດເລືອກນຳໃຊ້ ຮູບການ ແລະ ຮູບແບບວິສາຫະກິດໃນການສ້າງຕັ້ງແລະ ການເຄື່ອນໄຫວທຸລະກິດຂອງຕົນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 13, 14 ຂອງກົດໝາຍ ວ່າດ້ວຍວິສາຫະກິດ ແຫ່ງ ສປປ ລາວ;
- ວິສາຫະກິດຂອງລັດ, ວິສາຫະກິດປະສົມ, ວິສາຫະກິດລວມໝູ່ ສາມາດສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຂອງຕົນຕາມຮູບແບບບໍລິສັດເທົ່ານັ້ນ. ວິສາຫະກິດຂອງລັດເອີ້ນວ່າ `` ບໍລິສັດ `` ແລະວິສາຫະກິດປະສົມ ເອີ້ນວ່າ `` ບໍລິສັດປະສົມ `` .

**ມາດຕາ 14. ເງື່ອນໄຂຂໍອະນຸຍາດສ້າງຕັ້ງ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງ ວິສາຫະກິດບໍລິການຈັດຫາງານ ຕ້ອງມີເງື່ອນໄຂ ດັ່ງນີ້:

- ເປັນຄົນສັນຊາດລາວ ຫລື ຄົນຕ່າງປະເທດຮ່ວມທຶນກັບຄົນລາວ;
- ມີອາຍຸ ຕັ້ງແຕ່ 25 ປີຂຶ້ນໄປ;
- ມີລະດັບການສຶກສາ ຈົບມັດທະຍົມປາຍຂຶ້ນໄປ;
- ມີສຸຂະພາບແຂງແຮງ ແລະ ສົມບູນ;
- ມີຊີວະປະຫວັດຈະແຈ້ງ;
- ມີເງິນຄ້ຳປະກັນເວລາຈັດສົ່ງໄປຕ່າງປະເທດ ແລະ ເງິນຈົດທະບຽນຂໍອະນຸຍາດສ້າງຕັ້ງ;
- ຕ້ອງຍື່ນເອກະສານຂໍອະນຸຍາດ ດ້ວຍຕົນເອງ;
- ບໍ່ຢູ່ໃນໄລຍະລົ້ມລະລາຍດ້ານທຸລະກິດ;
- ມີປະສົບການດ້ານການດຳເນີນທຸລະກິດໃດໜຶ່ງມາກ່ອນ ແລະ ຕ້ອງມີວິຊາການດ້ານແຮງງານ.

**ມາດຕາ 15. ການປະກອບເອກະສານ**

ເອກະສານທີ່ຈະຂໍອະນຸຍາດສ້າງຕັ້ງ ວິສາຫະກິດບໍລິການຈັດຫາງານ ມີດັ່ງນີ້:

- ໃບຄຳຮ້ອງຂໍອະນຸຍາດ ສ້າງຕັ້ງ ວິສາຫະກິດ ບໍລິການຈັດຫາງານພາຍໃນ ຫລື ທັງຈັດຫາງານພາຍໃນປະເທດ ແລະ ຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ ຕ້ອງບົ່ງແຈ້ງ;
- ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບການບໍລິການຈັດຫາງານ;
- ໃບຊີວະປະຫວັດ ຂອງຜູ້ອຳນວຍການ;
- ຕ້ອງມີວຸດທິການສຶກສາຈົບ ມ. ປາຍ ຫລື ວິຊາສະເພາະອັນແນ່ນອນ;
- ໂຄງຮ່າງການຈັດຕັ້ງ ຫລື ສະພາບໍລິຫານ;
- ສະຖານທີ່ຕັ້ງ ຂອງວິສາຫະກິດ ບໍລິການ ຈັດຫາງານ, ນ້ຳເບີໂທລະສັບ, ແຟກ;
- ກົດລະບຽບການດຳເນີນທຸລະກິດ;
- ກົດລະບຽບກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ແຮງງານ(ຄຸ້ມຄອງພະນັກງານ);
- ໃບຢັ້ງຢືນທີ່ຢູ່;
- ໃບແຈ້ງໂທດເບີ 3;

- ສຳເນົາບັດປະຈຳຕົວ ແລະ ສຳເນົາສຳມະໂນຄົວ;
- ຮູບ ຂະໜາດ 4X6 ຈຳນວນ 4 ໃບ;
- ເອກະສານກ່ຽວຂ້ອງອື່ນໆ.

**ມາດຕາ 16. ທຶນຈົດທະບຽນ ແລະ ເງິນ ຄໍ້າປະກັນ**

ວິສາຫະກິດບໍລິການຈັດຫາງານຕ້ອງມີທຶນຈົດທະບຽນ ແລະ ເງິນຄໍ້າປະກັນ ດັ່ງນີ້ :

- ທຶນຈົດທະບຽນ ແລະ ທຶນໝູນວຽນ ສຳລັບຈັດຫາງານພາຍໃນ ຈຳນວນ 200.000.000 ກີບ, (ສອງຮ້ອຍລ້ານກີບ) ພ້ອມກັນນີ້ຕ້ອງມີເງິນສົດຄໍ້າປະກັນ ເທົ່າກັບ 2.000 ໂດລາສະຫາລັດ ;
- ການບໍລິການຈັດຫາງານທັງພາຍໃນ ແລະ ໄປຕ່າງປະເທດ ຕ້ອງມີທຶນຈົດທະບຽນ ແລະ ທຶນໝູນວຽນຕໍ່າສຸດ ຈຳນວນ 2000.000.000 ກີບ,(ສອງພັນລ້ານກີບ) ພ້ອມກັນນີ້ຕ້ອງມີ ເງິນສົດຄໍ້າປະກັນ 20.000 ໂດລາສະຫາລັດ;
- ເງິນຄໍ້າປະກັນດັ່ງກ່າວ ແມ່ນຖອນເຂົ້າບັນຊີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອແຮໄວ້ຈ່າຍສຸກເສີນ, ແກ້ໄຂຄວາມຜິດພາດ ທີ່ຈະເກີດຂຶ້ນໃນການປະຕິບັດສັນຍາການບໍລິການຈັດຫາງານເຊັ່ນ: ຈ່າຍຊົດເຊີຍຄ່າເສຍຫາຍຕ່າງໆ ຂອງຜູ້ມາໃຊ້ບໍລິການ ໂດຍມີການຢັ້ງຢືນເປັນລາຍລັກອັກສອນຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ, ຖ້າບໍ່ມີຂໍ້ຜິດພາດໃດໆ ເກີດຂຶ້ນເງິນດັ່ງກ່າວຈະສົ່ງຄືນໃຫ້ເຈົ້າຂອງວິສາຫະກິດບໍລິການ ຈັດຫາງານ ໃນເວລາຍົກເລີກການດຳເນີນທຸລະກິດບໍລິການຈັດຫາງານຢ່າງເປັນທາງການ;
- ເງິນຄໍ້າປະກັນການສ້າງຕັ້ງວິສາຫະກິດຕ້ອງຖອກກ່ອນການໄດ້ຮັບໃບອະນຸຍາດ.

**ມາດຕາ 17. ກຳນົດຈຳນວນວັນຄົ້ນຄວ້າ ແລະ ອອກໃບອະນຸຍາດ**

ການຄົ້ນຄວ້າ ແລະ ພິຈາລະນາອອກໃບອະນຸຍາດ ໃຫ້ສ້າງຕັ້ງວິສາຫະກິດ ບໍລິການຈັດຫາງານ ຢູ່ພາຍໃນປະເທດ ບໍ່ໃຫ້ເກີນ 30 ວັນລັດຖະການ, ນັບແຕ່ມື້ໄດ້ຮັບຄຳຮ້ອງ (ບໍ່ນັບມື້ຄຳຮ້ອງຜ່ານພະແນກ ຮສສ ແຂວງ ຫຼື ນະຄອນຫຼວງ) ;

ການຄົ້ນຄວ້າ ແລະ ອອກອະນຸຍາດໃຫ້ສ້າງຕັ້ງວິສາຫະກິດບໍລິການ ຈັດຫາງານພາຍໃນ ແລະ ໄປຕ່າງປະເທດ ບໍ່ໃຫ້ເກີນ 60 ວັນລັດຖະການ, ນັບແຕ່ມື້ຮັບຄຳຮ້ອງ.

**ມາດຕາ 18. ກຳນົດເວລາຂອງໃບອະນຸຍາດສ້າງຕັ້ງວິສາຫະກິດບໍລິການຈັດຫາງານ**

ໃບອະນຸຍາດ ສ້າງຕັ້ງວິສາຫະກິດ ບໍລິການ ຈັດຫາງານມີກຳນົດ 2 ປີ ແລະສາມາດຂໍຕໍ່ໃບອະນຸຍາດໄດ້, ແຕ່ຕ້ອງແຈ້ງໃຫ້ອົງການລັດທີ່ຄຸ້ມຄອງການຈັດຫາງານຊາບກ່ອນ 30 ວັນ, ຖ້າຫາກກາຍກຳນົດຖືວ່າສະຫຼະສິດ.

**ມາດຕາ 19. ການຂໍຕໍ່ໃບອະນຸຍາດສ້າງຕັ້ງວິສາຫະກິດຈັດຫາງານ**

ວິສາຫະກິດບໍລິການຈັດຫາງານທີ່ຂໍຕໍ່ໃບອະນຸຍາດສ້າງຕັ້ງ ມີເງື່ອນໄຂດັ່ງນີ້:

- ປະຕິບັດລະບຽບ, ກົດໝາຍ ຂອງລັດວາງອອກຢ່າງຖືກຕ້ອງ;
- ເຄື່ອນໄຫວ ບໍລິການ ຈັດຫາງານ ແລະ ຄຸ້ມຄອງຜູ້ອອກແຮງງານຢ່າງມີປະສິດທິຜົນດີ;

- ບໍ່ໄດ້ສ້າງຄວາມເສຍຫາຍທາງດ້ານເສດຖະກິດ - ສັງຄົມ;
- ປະຕິບັດພັນທະໃຫ້ລັດ ຢ່າງຖືກຕ້ອງ ແລະ ຄົບຖ້ວນ;
- ມີການສະຫລຸບລາຍງານຂໍ້ມູນການຈັດຫາງານໃຫ້ອົງການລັດຄຸ້ມຄອງການຈັດຫາງານ ຢ່າງເປັນປົກກະຕິ.

## ໝວດທີ III
## ຂອບເຂດການເຄື່ອນໄຫວຂອງວິສາຫະກິດຈັດຫາງານ

**ມາດຕາ 20. ຂອບເຂດສິດ ຂອງວິສາຫະກິດບໍລິການຈັດຫາງານ**

ວິສາຫະກິດບໍລິການຈັດຫາງານມີສິດ ດັ່ງນີ້:

- ເຄື່ອນໄຫວດໍາເນີນທຸລະກິດ ບໍລິການ ຈັດຫາງານ ໃຫ້ແຮງງານລາວຢູ່ພາຍໃນປະເທດ ຫລື ຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດຕາມການອະນຸຍາດ ພາຍໃຕ້ການຊີ້ນໍາ ແລະ ຄຸ້ມຄອງຂອງອົງການລັດທີ່ຄຸ້ມຄອງການຈັດຫາງານ;
- ເກັບກໍາຂໍ້ມູນຄວາມຕ້ອງການ ແລະ ການສະໜອງແຮງງານ ເພື່ອວາງແຜນການຝຶກແຮງງານຕາມ ຄວາມຕ້ອງການຂອງຕະຫລາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ;
- ຮັບສະໝັກງານຕາມຮູບການ, ທາງເລືອກ ແລະ ຮູບແບບ ຕາມຄວາມສາມາດ ແລະ ທ່າແຮງຂອງວິສາຫະກິດຂອງຕົນໂດຍໄດ້ຮັບອະນຸຍາດຈາກອົງການລັດຄຸ້ມຄອງການຈັດຫາງານ;
- ເຂົ້າຮ່ວມປະຊຸມ ປະກອບຄໍາເຫັນ ແລະ ແລກປ່ຽນປະສົບປະການນໍາວິສາຫະກິດຈັດຫາງານດ້ວຍກັນ ຫລື ອົງການຂອງລັດຕາມຄໍາເຊີນ;
- ເກັບເງິນຄ່າທໍານຽມເອກະສານ ແລະ ຄ່າບໍລິການຈັດຫາງານຕາມລະບຽບການ;
- ເຂົ້າຮ່ວມ ຫລື ຈັດງານຕະຫລາດນັດແຮງງານລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ, ໃຫ້ຄໍາແນະນໍາ ແລະ ໃຫ້ຄໍາປຶກສາແກ່ຜູ້ສະໝັກງານ, ພ້ອມທັງສ້າງຄວາມໝັ້ນໃຈ ໃຫ້ຜູ້ໃຊ້ແຮງງານ ໂດຍການອະທິບາຍລະບົບ, ຂັ້ນຕອນ, ຄຸນນະພາບຂອງແຮງງານທີ່ວິສາຫະກິດບໍລິການຈັດຫາງານ ຈະສົ່ງໃຫ້ຜູ້ໃຊ້ແຮງງານນໍາໃຊ້;
- ເຂົ້າຮ່ວມ ແລະ ຊຸກຍູ້ການທົດສອບ, ການແຂ່ງຂັນສີມືແຮງງານຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 21. ໜ້າທີ່ຂອງວິສາຫະກິດບໍລິການຈັດຫາງານ**

ວິສາຫະກິດບໍລິການຈັດຫາງານມີໜ້າທີ່ ດັ່ງນີ້:

- ແຈ້ງສະຖານທີ່ຕັ້ງ, ຕິດປ້າຍວິສາຫະກິດ ແລະແຈ້ງບັນຊີລາຍຊື່ ພ້ອມປະຫວັດຂອງພະນັກງານທີ່ ເຮັດວຽກນໍາຕົນ ລວມທັງພະນັກງານສາຂາໃຫ້ອົງການຄຸ້ມຄອງການຈັດຫາງານຊາບ ເພື່ອສະດວກ ໃນການຕິດຕໍ່ພົວພັນ;
- ອອກບັດປະຈໍາຕົວພະນັກງານຈັດຫາງານທຸກຄົນ ເພື່ອສະດວກໃນການເຄື່ອນໄຫວລະດົມເອົາແຮງງານ ແລະ ປະສານງານກັບທ້ອງຖິ່ນ ພາຍຫລັງສິ້ນສຸດການເປັນພະນັກງານວິສາຫະກິດຈັດຫາງານແລ້ວໃຫ້ສົ່ງບັດຄືນ;
- ຄົ້ນຄວ້າ, ປະສານງານ ແລະ ຊອກຮູ້ ຄວາມຕ້ອງການ ຂອງຕະຫລາດແຮງງານຢູ່ພາຍໃນປະ

ເທດ ແລະ ຕ່າງປະເທດ, ເຮັດສັນຍາສະໜອງແຮງງານກັບຫົວໜ່ວຍແຮງງານ, ເພື່ອສະໜອງແຮງງານ ລາວ ຕາມຄວາມຕ້ອງການຂອງຕະຫລາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ;

- ເປັນເຈົ້າການ ໃນການສ້າງສັນຍາ ສະໜອງແຮງງານ, ສັນຍາຜູກພັນ ແລະ ສັນຍາແຮງງານລະຫວ່າງວິສາຫະກິດຂອງຕົນກັບວິສາຫະກິດຄູ່ສັນຍາ, ລະຫວ່າງວິສາຫະກິດຂອງຕົນກັບຜູ້ອອກແຮງງານ ແລະ ລະຫວ່າງ ຜູ້ໃຊ້ແຮງງານ ກັບ ຜູ້ອອກແຮງງານແຕ່ລະຄົນ;
- ຕິດຕາມ, ຄຸ້ມຄອງ ເພື່ອປົກປ້ອງ ສິດທິ ແລະ ຜົນປະໂຫຍດ ຂອງຜູ້ອອກແຮງງານທີ່ມາໃຊ້ການບໍລິການນຳວິສາຫະກິດຂອງຕົນ ໃຫ້ມີຄວາມປອດໄພ ແລະ ຮັບຜິດຊອບນຳສົ່ງແຮງງານກັບຄືນຖິ່ນຖານເດີມເມື່ອສິ້ນສຸດສັນຍາ; ໃນກໍລະນີມີຂໍ້ຂັດແຍ່ງແຮງງານ ຫລື ເກີດເຫດການໃດໜຶ່ງກັບຜູ້ອອກແຮງງານຕ້ອງຮີບຮ້ອນແກ້ໄຂ ແລະລາຍງານໃຫ້ອົງການລັດຄຸ້ມຄອງການຈັດຫາງານທັນທີ;
- ເຜີຍແຜ່, ແນະນຳ, ໃຫ້ຄຳປຶກສາແກ່ຜູ້ອອກແຮງງານທີ່ມາສະໝັກງານນຳຕົນໃຫ້ເຂົ້າໃຈເຖິງລະບົບຈັດຫາງານ ແລະ ການເຮັດວຽກຢ່າງປອດໄພ, ມີລາຍໄດ້ ແລະ ຫລຸດຜ່ອນ ຄວາມທຸກຍາກ;
- ຈ່າຍເງິນຄ່າຝຶກອົບຮົມ, ອາຫານ, ພັກເຊົາ, ເອກະສານ, ຄ່າເດີນທາງ ສຳລັບການກະກຽມ ສົ່ງຜູ້ອອກແຮງງານເຂົ້າເຮັດວຽກ;
- ຈັດຝຶກອົບຮົມ ແລະ ຍົກລະດັບສີມືໃຫ້ຜູ້ອອກແຮງງານທີ່ມາຂຶ້ນທະບຽນ ເພື່ອກຽມສະໜອງໃຫ້ຕະຫລາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ;
- ສະຫລຸບລາຍງານຜົນການເຄື່ອນໄຫວ ແລະ ແຜນການດຳເນີນທຸລະກິດ ປະຈຳເດືອນ, ໄຕມາດ ແລະ ປະຈຳປີ ໃຫ້ ອົງການລັດຄຸ້ມຄອງການຈັດຫາງານ ແລະ ຂະແໜງການທີ່ກ່ຽວຂ້ອງຊາບເປັນປົກກະຕິ;
- ປະຕິບັດພັນທະຕ່າງໆກ່ຽວກັບການດຳເນີນທຸລະກິດຕາມລະບຽບກົດໝາຍຂອງລັດທີ່ໄດ້ກຳນົດໄວ້ຢ່າງຄົບຖ້ວນ ແລະ ທັນເວລາ;
- ກໍລະນີ ມີການສ້າງຕັ້ງສາຂາ, ຍົກຍ້າຍຫ້ອງການ, ປິດກິດຈະການ ຫລື ປ່ຽນແປງຄະນະອຳນວຍການຕ້ອງແຈ້ງໃຫ້ ອົງການລັດທີ່ຄຸ້ມຄອງການຈັດຫາງານ ແລະ ຂະແໜງການທີ່ກ່ຽວຂ້ອງຊາບ;
- ເຄື່ອນໄຫວຕາມພາລະບົດບາດ, ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 22. ພັນທະຂອງວິສາຫະກິດ**

ວິສາຫະກິດມີພັນທະໃນການເຄື່ອນໄຫວທຸລະກິດ ຕາມວັດຖຸປະສົງຂອງຕົນ, ຖືບັນຊີວິສາຫະ ກິດ, ປະຕິບັດພັນທະຕໍ່ລັດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ, ປົກປັກ ຮັກສາສິ່ງແວດລ້ອມ ແລະ ເຄົາລົບລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງຂອງສປປ ລາວ.

**ມາດຕາ 23. ການໃຫ້ຄົນອື່ນໃຊ້ຊື່ວິສາຫະກິດ ຫລື ທະບຽນວິສາຫະກິດ**

ການໃຫ້ຄົນອື່ນ ໃຊ້ຊື່ວິສາຫະກິດ ຫລື ທະບຽນວິສາຫະກິດ ເພື່ອດຳເນີນທຸລະກິດຕ້ອງເຮັດເປັນລາຍລັກອັກສອນ ແລະ ປະຕິບັດຕາມກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາຂອງ ສປປ ລາວ.

ໃນກໍລະນີທີ່ບໍ່ໄດ້ມອບສິດໃຫ້ໃຊ້ຊື່ ຫລື ທະບຽນວິສາຫະກິດເປັນລາຍລັກອັກສອນ ແຕ່ຫາກມີຫລັກຖານວ່າເຈົ້າຂອງຊື່ວິສາຫະກິດ ຫລື ທະບຽນວິສາຫະກິດຮູ້ ແຕ່ບໍ່ທັກທ້ວງ ຫລື ຄັດຄ້ານ ຫລື ໃຫ້ການສະໜັບສະໜູນ ກໍ່ຖືວ່າເປັນການມອບສິດດັ່ງກ່າວຢ່າງຖືກຕ້ອງ.

**ມາດຕາ 24. ສາຂາຂອງວິສາຫະກິດ**

- ສາຂາວິສາຫະກິດບໍລິການຈັດຫາງານ ຕັ້ງຢູ່ບ່ອນໃດຕ້ອງແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດກ່ຽວຂ້ອງຢູ່ບ່ອນນັ້ນຊາບ ເພື່ອປະຕິບັດຕາມຂັ້ນຕອນຂອງລະບຽບ, ກົດໝາຍ;
- ການຕັ້ງສາຂາວິສາຫະກິດຢູ່ຕ່າງປະເທດໃຫ້ປະຕິບັດຕາມລະບຽບການ ແລະ ກົດໝາຍຂອງປະເທດນັ້ນ.

**ມາດຕາ 25. ກຸ່ມວິສາຫະກິດ**

ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນຈະເຮັດໃຫ້ການບໍລິການຈັດຫາງານມີຄວາມເຂັ້ມແຂງ ແລະ ສາມາດຈັດຫາງານໃຫ້ພົນລະເມືອງລາວໄດ້ຫລາຍຂຶ້ນວິສາຫະກິດບໍລິການຈັດຫາງານສາມາດສ້າງຕັ້ງເປັນກຸ່ມກໍ່ໄດ້ ແຕ່ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດຂອງສປປລາວ.

**ມາດຕາ 26. ການຍຸບເລີກ**

ວິສາຫະກິດບໍລິການຈັດຫາງານ ຖືກຍຸບເລີກຕາມກໍລະນີດັ່ງນີ້ :

- ມີຄຳສັ່ງໃຫ້ຍຸບເລີກຈາກລັດຖະບານ ຫລື ອົງການທີ່ອອກອະນຸຍາດໃຫ້ດຳເນີນວິສາຫະກິດບໍລິການຈັດຫາງານ;
- ການດຳເນີນທຸລະກິດລົ້ມລະລາຍ;
- ເຄື່ອນໄຫວຫລຸບທຶນຢ່າງຕໍ່ເນື່ອງ ແລະ ບໍ່ສາມາດແກ້ໄຂໄດ້ ແຕ່ ວິສາຫະກິດຕ້ອງຮັບປະກັນການສຳລະສະສາງຕາມກົດໝາຍ;
- ທຸກກໍລະນີທີ່ຖືກຍຸບເລີກ ວິສາຫະກິດບໍລິການຈັດຫາງານຕ້ອງແກ້ໄຂ ບັນຫາໜີ້ສິນ, ບັນຫາການເຮັດວຽກຂອງແຮງງານ ແລະ ບັນຫາອື່ນໆ.

**ມາດຕາ 27. ສິດ ແລະ ໜ້າທີ່ ຜູ້ມາໃຊ້ບໍລິການ**

ຜູ້ມາໃຊ້ບໍລິການນຳວິສາຫະກິດບໍລິການຈັດຫາງານມີ ສິດ ແລະ ໜ້າທີ່ ດັ່ງນີ້:

- ປະຕິບັດຕາມເງື່ອນໄຂ, ລະບຽບການ ແລະ ກົດໝາຍທີ່ກ່ຽວພັນເຖິງການບໍລິການຈັດຫາງານຢູ່ພາຍໃນ ແລະ ຕ່າງປະເທດ;
- ໄດ້ຮັບເງິນເດືອນ ຫລື ຄ່າແຮງງານ ແລະໄດ້ຮັບການປົກປ້ອງສິດທິ, ຜົນປະໂຫຍດຕາມສັນຍາ ແລະ ລະບຽບກົດໝາຍ;

- ຮັບຜິດຊອບຄ່າໃຊ້ຈ່າຍອັນຈຳເປັນ ຂອງຕົນເອງໃນການມານຳໃຊ້ການບໍລິການຂອງວິສາຫະກິດຈັດຫາງານ;
- ເຂົ້າຮ່ວມການຝຶກອົບຮົມ, ການໃຫ້ຄຳແນະນຳ ແລະ ການເຜີຍແຜ່ຂອງວິສາຫະກິດບໍລິການຈັດຫາງານ;
- ເຮັດສັນຍາ ແລະ ປະຕິບັດສັນຍາທີ່ຕົນເອງໄດ້ລົງນາມໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມກຳນົດເວລາ;
- ປະຕິບັດລະບຽບການອອກແຮງງານ ແລະ ຮີດຄອງປະເພນີ ບ່ອນທີ່ຕົນໄປເຮັດວຽກຢ່າງເຂັ້ມງວດ;
- ປະຕິບັດພັນທະອື່ນໆ ທີ່ມີຢ່າງຖືກຕ້ອງຕາມລະບຽບກົດໝາຍ.

## ໝວດທີ IV
## ການຄຸ້ມຄອງ ວິສາຫະກິດ ບໍລິການ ຈັດຫາງານ

**ມາດຕາ 28. ການຄຸ້ມຄອງຂອງລັດ**

ວິສາຫະກິດບໍລິການຈັດຫາງານລວມທັງຂອງລັດ ແລະ ເອກະຊົນທີ່ຢູ່ສູນກາງ ແລະ ທ້ອງຖິ່ນ ແມ່ນຂຶ້ນກັບການຊີ້ນຳ ແລະ ຄຸ້ມຄອງຂອງ ອົງການລັດທີ່ຄຸ້ມຄອງການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ມາດຕາ 29. ສິດ ແລະ ໜ້າທີ່ ຂອງອົງການລັດຄຸ້ມຄອງການຈັດຫາງານ ກ່ຽວກັບການຈັດຫາງານ**

- ຄົ້ນຄ້ວາຄຳຮ້ອງຂໍອະນຸຍາດສ້າງຕັ້ງວິສາຫະກິດບໍລິການຈັດຫາງານທັງພາຍໃນ ແລະ ຕ່າງປະເທດ ເພື່ອສະເໜີຂໍອະນຸມັດຈາກລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານຕາມລະບຽບກົດໝາຍ;
- ໃຫ້ຄຳແນະນຳ, ຊີ້ນຳ, ສ້າງແຜນຝຶກອົບຮົມລະດັບພະນັກງານຂອງວິສາຫະກິດບໍລິການຈັດຫາງານ ໃຫ້ມີຄວາມເຂັ້ມແຂງ;
- ປັບປຸງລະບົບ ແລະ ກົນໄກການຈັດຫາງານໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫລາດແຮງງານ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;
- ຄົ້ນຄ້ວາພິຈາລະນາການຂໍຕໍ່ອະນຸຍາດ ຫລື ໃຫ້ຍຸບເລີກວິສາຫະກິດບໍລິການຈັດຫາງານທີ່ບໍ່ໄດ້ມາດຕະຖານ ຫລື ບໍ່ຖືກກັບເງື່ອນໄຂ;
- ຄົ້ນຄວ້າຜ່ານບັນຊີລາຍຊື່ ແລະ ອະນຸຍາດການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
- ປະຕິບັດສິດ, ໜ້າທີ່ອື່ນໆຕາມພາລະບົດບາດ, ຄວາມຮັບຜິດຊອບຂອງຕົນ ແລະ ຕາມລະບຽບກົດໝາຍ.

**ມາດຕາ 30. ສິດ ແລະ ໜ້າທີ່ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ-ນະຄອນຫລວງ ກ່ຽວກັບການຈັດຫາງານ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ/ນະຄອນຫລວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ຄົ້ນຄວ້າຄຳຮ້ອງຂໍອະນຸຍາດສ້າງຕັ້ງວິສາຫະກິດຈັດຫາງານທັງພາຍໃນ ແລະ ຕ່າງປະເທດຢູ່ໃນທ້ອງຖິ່ນຕົນເພື່ອສະເໜີຜ່ານໃຫ້ຂັ້ນເທິງພິຈາລະນາອະນຸຍາດ;
- ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງວິສາຫະກິດບໍລິການຈັດຫາງານທີ່ຕັ້ງຢູ່ທ້ອງຖິ່ນຂອງຕົນ ເພື່ອລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະ;
- ປະສານສົມທົບກັບວິສາຫະກິດບໍລິການຈັດຫາງານ ໃນການລະດົມເອົາແຮງງານເຂົ້າເຮັດວຽກໃນທ້ອງຖິ່ນຂອງຕົນ ຫລື ໄປເຮັດວຽກຢູ່ຕ່າງປະເທດເພື່ອດຸ່ນດ່ຽງແຮງງານບໍ່ໃຫ້ມີ ກໍລະນີຂາດແຄນແຮງງານ ແລະ ເກີດການຫວ່າງງານຢູ່ໃນແຂວງ ຫລື ນະຄອນຫຼວງ;
- ໃຫ້ຄຳແນະນຳ ແລະ ເຜີຍແຜ່ຂໍ້ມູນໃຫ້ຜູ້ອອກແຮງງານ ໃນການເຂົ້າເຮັດວຽກທີ່ປອດໄພ, ມີລາຍໄດ້ ແລະ ຫລຸດຜ່ອນຄວາມທຸກຍາກ;
- ຄົ້ນຄ້ວາ ແລະ ນຳສະເໜີວິທີປັບປຸງ ກົນໄກການຈັດຫາງານທີ່ສອດຄ່ອງກັບຕະຫລາດແຮງງານຂອງທ້ອງຖິ່ນຂອງຕົນ;
- ຄົ້ນຄວ້າ ແລະ ສະເໜີຂັ້ນເທິງ ເພື່ອຂໍຕໍ່ອະນຸຍາດ ຫລື ຍຸບເລີກວິສາຫະກິດບໍລິການຈັດຫາງານທີ່ຕັ້ງຢູ່ໃນທ້ອງຖິ່ນຂອງຕົນ;
- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມພາລະບົດບາດ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 31. ສິດ ແລະ ໜ້າທີ່ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ເທດສະບານກ່ຽວກັບການຈັດຫາງານ**

- ເຜີຍແຜ່, ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ລະບຽບການຕ່າງໆ ກ່ຽວກັບການຈັດຫາງານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ປະສານສົມທົບກັບບັນດາຫ້ອງການ, ອົງການຈັດຕັ້ງຕ່າງໆ, ວິສາຫະກິດບໍລິການຈັດ ຫາງານໃນການລະດົມເອົາແຮງງານເຂົ້າ ເຮັດວຽກໃນທ້ອງຖິ່ນຂອງຕົນ ຫລື ໄປເຮັດວຽກຢູ່ຕ່າງປະເທດເພື່ອດຸ່ນດ່ຽງແຮງງານບໍ່ໃຫ້ມີ ກໍລະນີຂາດແຄນແຮງງານ ແລະ ເກີດການຫວ່າງງານ ຢູ່ໃນເມືອງ ຫລື ເທດສະບານ;
- ຕິດຕາມ ແລະ ຊຸກຍູ້ການເຄື່ອນໄຫວຂອງບັນດາວິສາຫະກິດບໍລິການຈັດຫາງານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ເກັບກຳຂໍ້ມູນ ຄວາມຕ້ອງການແຮງງານ ແລະ ການສະໜອງແຮງງານ;
- ສະຫລຸບວຽກງານ ກ່ຽວກັບການຈັດຫາງານແລ້ວ ລາຍງານໃຫ້ຂັ້ນເທິງຊາບ ເປັນແຕ່ລະໄລຍະ;
- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມພາລະບົດບາດ ແລະ ການມອບໝາຍຂອງຂັ້ນເທິງ.

## ໝວດທີ V
## ການເກັບຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 32. ການເກັບຄ່າທຳນຽມ**

ການເກັບຄ່າທຳນຽມການບໍລິການຈັດຫາງານ ໃຫ້ປະຕິບັດດັ່ງນີ້:

- ຄ່າທຳນຽມແບບຟອມຕ່າງໆລວມທັງແບບຟອມສະໝັກງານຂອງຜູ້ອອກແຮງງານ ແລະ ການເຊັນຜ່ານເອກະສານອະນຸຍາດຢູ່ຂັ້ນທ້ອງຖິ່ນ ໃຫ້ເກັບ ຊຸດລະ 10.000 ກີບ ;
- ຄ່າທຳນຽມອອກໃບອະນຸຍາດສ້າງຕັ້ງ ວິສາຫະກິດ ບໍລິການຈັດຫາງານພາຍໃນປະເທດ 500.000 ກີບຕໍ່ຄັ້ງ ;
- ຄ່າທຳນຽມອອກໃບອະນຸຍາດສ້າງຕັ້ງ ວິສາຫະກິດບໍລິການຈັດຫາງານພາຍໃນ ແລະ ໄປຕ່າງປະເທດ 1.000.000 ກີບ ຕໍ່ຄັ້ງ ;

ສຳລັບການຕໍ່ໃບອະນຸຍາດແມ່ນ ໃຫ້ເກັບ 50% ຂອງຄ່າອະນຸຍາດສ້າງຕັ້ງ.

**ມາດຕາ 33. ການເກັບຄ່າບໍລິການຂອງວິສາຫະກິດບໍລິການຈັດຫາງານ**

ການເກັບຄ່າບໍລິການຂອງວິສາຫະກິດຈັດຫາງານ ປະຕິບັດດັ່ງນີ້ :

- ຈັດຫາງານໄປຕ່າງປະເທດ ໃຫ້ວິສາຫະກິດບໍລິການຈັດຫາງານເກັບເທົ່າກັບ 5% ຂອງເງິນເດືອນຜູ້ອອກແຮງງານແຕ່ລະເດືອນ ຫລືເກັບຄັ້ງດຽວຢູ່ຕົ້ນທາງ ຫລື ປາຍທາງຕາມ ການຕົກລົງເຫັນດີກັນລະຫວ່າງຜູ້ຈັດສົ່ງກັບຜູ້ອອກແຮງງານ;
- ການເກັບຄ່າບໍລິການຈັດຫາງານພາຍໃນປະເທດໃຫ້ວິສາຫະກິດບໍລິການຈັດຫາງານກັບ ເທົ່າກັບ 50% ຂອງເງິນເດືອນໆທຳອິດຂອງຜູ້ອອກແຮງງານ ແລະ ເກັບຄັ້ງດຽວເທົ່ານັ້ນ.
- ການເກັບຄ່າບໍລິການບໍລິການຈັດຫາງານ ແລະ ຄ່າທຳນຽມຕ້ອງມີໃບຢັ້ງຢືນຮັບເງິນທຸກໆຄັ້ງ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34. ນະໂຍບາຍຕໍ່ຜູ້ມີຜົນງານ**

ວິສາຫະກິດບໍລິການຈັດຫາງານ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໂດຍໄດ້ຮັບການຢັ້ງຢືນຈາກສະພາບໍລິຫານ ແລະ ອົງການຄຸ້ມຄອງການຈັດຫາງານຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 35. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ນິຕິບຸກຄົນທີ່ໄດ້ເຄື່ອນໄຫວຈັດຫາງານໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມລະບຽບກົດໝາຍຈະຖືກສຶກສາອົບຮົມ ແລະ ປັບໄໝ 300 ໂດລາຕໍ່ຄົນຕໍ່ຄັ້ງພ້ອມ ທັງສັ່ງຢຸດເຊົາການເຄື່ອນໄຫວທັນທີ, ກໍລະນີມີຄວາມເສຍຫາຍເກີດຂຶ້ນຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

- ວິສາຫະກິດບໍລິການ ຈັດຫາງານທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ໃຫ້ດຳເນີນທຸລະກິດ ບໍລິການຈັດຫາງານ ທັງຢູ່ພາຍໃນປະເທດ ແລະ ໄປຕ່າງປະເທດ ຫາກລະເມີດຂໍ້ຕົກລົງສະບັບນີ້ ຕາມກໍລະນີດັ່ງລຸ່ມນີ້ :

1. ຮັບສະໝັກເອົາແຮງງານຈາກແຂວງ ໂດຍບໍ່ແຈ້ງໃຫ້ແຂວງຊາບ ;
2. ໂຄສະນາການຈັດຫາງານບໍ່ເປັນໄປຕາມລະບຽບການກຳນົດ, ຕົວະຍົວະຫລອກລວງຜູ້ອອກແຮງງານ, ບໍ່ເຮັດສັນຍາກັບຜູ້ອອກແຮງງານ ;
3. ຮຽກ ຫລື ເກັບຄ່າບໍລິການ, ຊັບສິນ ຫລື ຄ່າໃຊ້ຈ່າຍເກີນກວ່າອັດຕາທີ່ລັດກຳນົດ ;
4. ບໍ່ສົ່ງແຮງງານກັບຄືນທ້ອງຖິ່ນເດີມ ຫລື ປະເທດລາວ ໃນກໍລະນີໝົດສັນຍາຈ້າງງານ ຫລື ໄດ້ ຄ່າແຮງງານຕ່ຳ ຫລື ຕຳແໜ່ງງານ, ສິດຜົນປະໂຫຍດບໍ່ກົງກັບສັນຍາແຮງງານ ແລະ ຜູ້ອອກແຮງງານ ຕ້ອງການກັບຄືນ;
5. ຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການ ຄຸ້ມຄອງການຈັດຫາງານ.

- ວິສາຫະກິດ ບໍລິການຈັດຫາງານ ທີ່ລະເມີດກໍລະນີຂ້າງເທິງ ຈະຖືກປະຕິບັດມາດຕະການ ຕາມຂັ້ນຕອນດັ່ງລຸ່ມນີ້:

ຄັ້ງທີ 1: ແນະນຳສຶກສາອົບຮົມ, ໃຊ້ແທນຄືນ ແລະ ປັບໃໝ 10% ຂອງມູນຄ່າທີ່ໃຫ້ໃຊ້ແທນຄືນ ;

ຄັ້ງທີ 2 :ໃຊ້ແທນຄືນ, ປັບໃໝເພີ່ມ 30% ຂອງມູນຄ່າທີ່ໃຫ້ໃຊ້ແທນຄືນ ;

ຄັ້ງທີ 3 : ໃຊ້ແທນຄືນ, ປັບໃໝເພີ່ມ 60% ຂອງມູນຄ່າທີ່ໃຫ້ໃຊ້ແທນຄືນ ;

ຄັ້ງທີ 4 : ສັ່ງໂຈະກິດຈະການຊົ່ວຄາວ ;

ຄັ້ງທີ່ 5 : ຖອນໃບອະນຸຍາດສ້າງຕັ້ງວິສາຫະກິດ ບໍລິການຈັດຫາງານ.

ກໍລະນີ ມີຄວາມເສຍຫາຍເກີດຂຶ້ນຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

ບຸກຄົນທີ່ມາໃຊ້ບໍລິການນຳວິສາຫະກິດບໍລິການຈັດຫາງານ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ໃຊ້ແທນຄ່າເສຍຫາຍ ຫລື ຖືກດຳເນີນຄະດີຕາມກົດໝາຍ.

ວິສາຫະກິດບໍລິການຈັດຫາງານຄູ່ສັນຍາຮັບເອົາແຮງງານຫາກບໍ່ປະຕິບັດຕາມສັນຍາຈະຖືກໃຊ້ແທນຄືນ ຫລື ສົ່ງໃຫ້ສານຕັດສິນ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

### ມາດຕາ 36. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ , ບັນດາພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫລວງ ເປັນຜູ້ຜັນຂະຫຍາຍ ແລະ ຊີ້ນຳການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 37. **ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ໃຊ້ໄດ້ ພາຍຫຼັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ຕົກລົງ, ກົດລະບຽບ ທີ່ປະກາດໃຊ້ ໃນເມື່ອກ່ອນ ຫາກຂັດກັບ ຂໍ້ຕົກລົງສະບັບນີ້ ແມ່ນຖືກຍົກເລີກ.

ລັດຖະມົນຕີວ່າການ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ຂອນຈັນ ທຳມະວົງ